


# ສືບຕໍ່ປະຕິບັດແຜນເຄື່ອນໄຫວຂອງອົງການຈັດຕັ້ງມະຫາຊົນ ຮາກຖານ ສາຂາ ທຫລ ພາກກາງ



ເພື່ອລະນຶກເຖິງຄຸນງາມຄວາມດີ ນໍ້າໃຈເສຍສະຫຼະອັນສູງສົ່ງຮັກສາປະເທດຊາດ ຂອງທ່ານນັກຮົບປະຕິວັດ ແລະ ເພື່ອສະເຫຼີມສະຫຼອງວັນສ້າງຕັ້ງກອງທັບປະຊາຊົນປະຕິວັດລາວ ຄົບຮອບ 68 ປີ (20/01/1949 – 20/01/2017).

ໃນຕອນແລງຂອງວັນທີ 26 ມັງກອນ 2017 ເວລາ 16:00 ໂມງ ທີ່ເດີ່ນກິລາເປຕັງຂອງກອງບັນຊາການທະຫານ ແຂວງສະຫວັນນະເຂດ ທີ່ຜ່ານມາ, ໄດ້ສ້າງຂະບວນການກິລາເປຕັງມິດຕະພາບຂຶ້ນ ລະຫວ່າງ ອົງການຈັດຕັ້ງມະຫາຊົນ ຮາກຖານ ສາຂາ ທຫລ ພາກກາງ ກັບ ກອງບັນຊາການທະຫານແຂວງສະຫວັນນະເຂດ ໂດຍມີຜູ້ເຂົ້າຮ່ວມທັງໝົດ ຈຳນວນ 54 ສະຫາຍ ຍິງ 28 ສະຫາຍ ແລະ ໄດ້ສົ່ງນັກກິລາເຂົ້າຮ່ວມຈາກ 2 ພາກສ່ວນ ປະກອບມີ 10 ທີມ.











(ມອບຂອງທີ່ລະນຶກ)



(ຮາກຖານແມ່ຍິງປະກອບສຽງເພງ)

ຕະຫຼອດໄລຍະເວລາຂອງການແຂ່ງຂັນກິລາດັ່ງກ່າວ ໄດ້ດຳເນີນໄປດ້ວຍບັນຍາກາດອັນເບີກບານມ່ວນຊື່ນ ແລະ ເຕັມໄປດ້ວຍຄວາມສາມັກຄີຮັກແພງ.

(ການແຂ່ງຂັນກິລາໄດ້ອັດລົງໃນເວລາ 21:00 ໂມງຂອງວັນດ້ວຍກັນ ດ້ວຍຜົນສຳເລັດອັນຈົບງາມ)

**ພາບ-ຂ່າວ: ເດດອາລຸນ ແສນທະວົງ**